VANG et al. (2021). Souphanouvong Journal of Multidisciplinary Research and Development ISSN 2521-0653. Volume 7. Issue 1. Jan – Jun 2021. Page 134-142.

# ໂມເດລໂຄງສ້າງປັດໃຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາ ທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ

**ຄຳມີ ວ່າງ[1], ວິລະ ອາໂນລັກ, ທິບພະກອນ ຖາວອນສັກ, ສົມໃຈ ໄພຍະວົງ, ຈັນທະລັກ ຈິດຖາວອນ, ໄພວັນ ປຸນນາລີ, ແສງມະນີ ລັດຕະນານົງສີ**

*ມະຫາວິທະຍາໄລສຸພານຸວົງ*

*[1] **ຕິດຕໍ່ພົວພັນ:** ຄຳມີ ວ່າງ, ພາກວິຊາຄູວິທະຍາສາດທຳມະຊາດ, ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ,*
*Tel: +856 20 2874 4415, E-mail: Aibmis2018@gmail.com*

***ຂໍ້ມູນບົດຄວາມ:***
*ວັນທີສະໜັກ: 03 ພຶດສະພາ 2021*
*ປັບປຸງສຳເລັດ:16 ພຶດສະພາ 2021*
*ຕອບ-ຮັບ:25 ພຶດສະພາ 2021*

**ບົດຄັດຫຍໍ້**

ງານວິໄຈໃນຄັ້ງນີ້ ມີຈຸດປະສົງ: ເພື່ອສ້າງ ແລະ ພັດທະນາໂມເດລໂຄງສ້າງປັດໃຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາ ແລະ ເພື່ອສຶກສາເຖິງຂໍ້ສະເໜີ ແລະ ຄຳແນະນຳເພີ່ມເຕີມເພື່ອໃຫ້ມະຫາວິທະຍາໄລ ປັບປຸງໃນດ້ານຕ່າງໆ ກຸ່ມຕົວຢ່າງແມ່ນ: ອະດີດນັກສຶກສາທີ່ຮຽນຈົບການສຶກສາ ຈາກມະຫາວິທະຍາໄລ ສຸພານຸວົງ ເລີ່ມແຕ່ສົກສຶກສາ 2015-2020 ຈຳນວນ 220 ຊຸດ ໂດຍແບ່ງຕາມບັນດາແຂວງ ໃນ 8 ແຂວງພາກເໜືອ ແລະ ນະຄອນຫຼວງວຽງຈັນ. ເຄື່ອງມືທີ່ໃຊ້ແມ່ນໃຊ້ແບບສອບຖາມ (Questionnaires) ເປັນການວິໄຈແບບ (Quantitative Research) ໃຊ້ເທັກນິກ Second order confirmatory Factor Analysis: (S-CFA) ແລະ Structure Equation Modeling: (SEM) ໂດຍໃຊ້ໂປຣແກຣມ Amos Version 21 ໂດຍມີການປະມານຄ່າພາຣາມິເຕີ ດ້ວຍວິທີການປະມານຄ່າຄວາມເປັນໄດ້ສູງສຸດ Maximum Likelihood: (ML).

ຜົນການວິເຄາະ (S-CFA) ແລະ (SEM) ພົບວ່າ: ປັດໃຈທີ່ສຳຄັນສູ່ຄວາມສຳເລັດຂັ້ນພື້ນຖານຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາມີ 3 ອົງປະກອບ ທີ່ມີໄລຍະສຳຄັນທາງສະຖິຕິ 0.05 ເຊັ່ນ: ປັດໃຈດ້ານການປະພຶດຕົນ, ດ້ານທັກສະ ແລະ ດ້ານຄວາມສາມາດ. ປັດໃຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາມີ 5 ອົງປະກອບ ທີ່ມີໄລຍະສຳຄັນທາງສະຖິຕິ 0.1 ເຊັ່ນ: ປັດໃຈສຳຄັນດ້ານຄຳແນະນຳ ແລະ ການຈັດຫາງານ, ດ້ານຄວາມສອດຄ່ອງລະຫວ່າງຄວາມຮູ້ ກັບໜ້າວຽກ, ດ້ານການຄຸ້ມຄອງຂອງຄະນະວິຊາ, ດ້ານຫຼັກສູດການສອນ ແລະ ດ້ານການສິດສອນ.

ຂໍ້ສະເໜີຕໍ່ມະຫາວິທະຍາໄລ ສຸພານຸວົງ ຫຼື ຄະນະບໍລິຫານ ຢາກໃຫ້ມະຫາວິທະຍາໄລ ສຸພານຸວົງ ປັບປຸງຫຼັກສູດໃຫ້ສອດຄ່ອງກັບການພັດທະນາທ້ອງຖິ່ນ ແລະ ຕະຫຼາດແຮງງານໃນປະຈຸບັນ, ປ່ຽນຮູບແບບທິດສະດີໃຫ້ເປັນການລົງເລິກພາກປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ເພາະຈະເຮັດໃຫ້ບັນດິດມີຄວາມຊ່ຽວຊານໃນດ້ານວິຊາການ, ຄວນມີການສ້າງໂຄງການ ເພື່ອປະກັນຄຸນນະພາບຂອງບັນດິດໃຫ້ແນ່ນອນ ເປັນຕົ້ນແມ່ນການມີວຽກເຮັດງານທຳ, ການມີຄວາມຮູ້ທາງວິຊາການເພື່ອສາມາດເຂົ້າຮັບໃຊ້ໃນໜ້າວຽກທີ່ໄດ້ມອບໝາຍໃຫ້ມີປະສິດທິພາບ.

**ຄຳສັບສຳຄັນ:**

*ໂມເດລໂຄງສ້າງ, ຄວາມສຳເລັດຕໍ່ໜ້າວຽກ, ມະຫາວິທະຍາໄລສຸພານຸວົງ*

VANG et al. (2021). Souphanouvong Journal of Multidisciplinary Research and Development ISSN 2521-0653. Volume 7. Issue 1. Jan – Jun 2021. Page 134-142.

# The Key Factor - Structural Equation Models for Success in Souphanouvong University Graduates' Career

**Khammee VANG[1], Vira ANOLAC, Thipphakone THAVONESACK, Somechay PHAIGNAVONG, Chanthalack CHITTAVONE, Phayvanh PHOUNNALY, Sengmany Lattananongsy**

*Souphanouvong University, Lao PDR*

***[1]Correspondence:***
*Khammee VANG, Department of Natural of Science Pedagogy, Faculty of Education, Souphanouvong University., Tel: +856 20 28744415, E-mail: Aibmis2018@gmail.com*

***Article Info:***
*Submitted: May 3, 2021*
*Revised: May 16, 2021*
*Accepted: May 25, 2021*

**Abstract**

The purposes of this research were to study: An assessment of the graduates' employability from 2015-2020 after graduation from Souphanouvong University The sample groups were 220 alumni, who completed their studies between the year 2015-2020 at Souphanouvong University, divided into 8 northern provinces and Vientiane Capital. The stratified sampling technique was applied for selecting the samples. The key instruments, used to collect data, was a questionnaire with multiple choices in 5-point Likert scales. The statistics used in the data analysis was frequency, percentage, mean and standard deviation.

**The research results were below:** Alumni who graduated from Soupahnovuong University are looking for jobs after graduation, and overall, the work they are assigned or offered is related to the subjects and degrees they have completed, with a score mean at 4.07, with a standard deviation (SD) at 1.012 and 70.8% of employers informed that they were employing graduates at the level of their degree.

Most of them work in technical positions and 83.6% of respondents are still employed in their first job and 14.5% did not continue employment the first job. Among those who have changed their job, most of them did it for a better paid job (37.5%) and 77.8% of respondents are currently employed. The role of social network (friends/relative/teacher/other) was the main path to find the first job. The role of the state is still extremely important to recruit new graduates to secure and stable positions, Working for employers must use foreign languages at work, which accounts for 81.9%. Different languages which are primarily used in work are English, Thai, Vietnamese and Chinese, but 79.2% of them think the language level of the graduates is too low. The issue of equality in job search by sex and ethnicity can be summarized as follows: Women and men have equal access to employment with a statistically significant period of 0.05 with a statistical value in the test. Hypothesis: Chi-Square = 0.200, D.F. = 1, Sig. of Chi-Square = 0.655 and the lower Lao and other ethnic groups had equal access to employment with a statistically significant range of 0.05. With statistical values in the hypothesis test: Chi-Square = 2.61, D.F. = 5, Sig. of Chi-Square = 0.755. Most of the employers desire Souphanouvong University to provide and teach students with problem-solving skills, followed by foreign language skills, and having proficiency in Lao language skills.

**Keywords**: *Structural Equation Models, Success to graduates' Career, Souphanouvong University*

## 1. ພາກສະເໜີ

ການສຶກສາເປັນເຄື່ອງມືທີ່ສຳຄັນໃນການສ້າງສັງຄົມ ແລະ ສ້າງຊາດເປັນກົນໄກຫຼັກໃນການພັດທະນາສັງຄົມໃຫ້ມີຄຸນນະພາບ ເນື່ອງຈາກການສຶກສາເປັນປັດໄຈຫຼັກສູ່ຄວາມສຳເລັດຕໍ່ໜ້າທີ່ຮັບຜິດຊອບຂອງບັນດິດ (Burmas & Nakaro, 2013). ການຊອກວຽກເຮັດງານທຳໃນປະຈຸບັນແມ່ນມີການແຂ່ງຂັນກັນຢ່າງຮຸນແຮງ ເປັນຕົ້ນແມ່ນການຍາດຊີງເຂົ້າເຮັດວຽກໃນແຕ່ລະອົງກອນ (ພາກລັດ-ເອກະຊົນ) ເຊິ່ງອັດຕາສ່ວນຂອງໄວໜຸ່ມທີ່ມີວຽກເຮັດງານທຳ ໃນການຈ້າງງານສ່ວນໃຫ່ຍແມ່ນ: ເຮັດວຽກໃຫ້ຄົວເຮືອນກວມ ອັດຕາສ່ວນສູງກວ່າໝູ່ (38%), ຮອງລົງມາ ຜູ້

ອອກແຮງງານທົ່ວໄປ (32%) ແລະ ອີກປະມານ (30%) ແມ່ນເຮັດວຽກໃນຂົງເຂດກະສິກຳ, ປ່າໄມ້ ແລະ ການປະມົງເປັນຫຼັກ, ຮອງລົງມາ ແມ່ນການຄ້າຂາຍຍົກຂາຍຍ່ອຍ, ການບໍລິຫານພາກລັດ, ການປ້ອງກັນ, ການປະກັນສັງຄົມພາກບັງຄັບ. (ສູນສະຖິຕິແຫ່ງຊາດ, 2018, ໜ້າ. 43-59).

ການພັດທະນາຊັບພະຍາກອນມະນຸດຖືວ່າເປັນພາລະກິດຫຼັກທີ່ສຳຄັນຢ່າງຍິ່ງຂອງມະຫາວິທະຍາໄລ ສຸພານຸວົງ ໂດຍໄດ້ເນັ້ນໜັກໃຫ້ທຸກພາກສ່ວນຕ້ອງປະຕິບັດຕາມພາລະບົດບາດຂອງໃຜລາວເປັນຕົ້ນແມ່ນ: ການປະຕິບັດໜ້າທີ່ໃນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ ຕອບສະໜອງຄວາມຕ້ອງການຂອງການພັດທະນາ ເສດຖະກິດ-ສັງຄົມ ໃຫ້ມີປະສິດທິພາບ ເພື່ອໃຫ້ສອດຄ່ອງກັບວິໄສທັດຂອງມະຫາວິທະຍາໄລ ສຸພານຸວົງທີ່ໄດ້ວາງອອກ “ລົງເລິກວິຊາສະເພາະ ພັດທະນາທ້ອງຖິ່ນ ກ້າວສູ່ມາດຕະຖານສາກົນ” (ມະຫາວິທະຍາໄລ ສຸພານຸວົງ, 2020). ຕະຫຼອດສົກສຶກສາທີ່ຜ່ານມາຮອດປັດຈຸບັນ ມະຫາວິທະຍາໄລ ສຸພານຸວົງ ໄດ້ຜະລິດນັກສຶກສາປະລິນຍາຕີອອກຮັບໃຊ້ສັງຄົມຈຳນວນທັງໝົດ 9.491 ຄົນ, ຍິງ 3816 ຄົນ. ໃນສົກສຶກສາ 2019-2020 (ມີຈຳນວນ 738 ຄົນ, ຍິງ 306 ຄົນ) ແລະ ສົກສຶກສາ 2014-2015 (ມີຈຳນວນ 808 ຄົນ, ຍິງ 304 ຄົນ) ເມື່ອສົມທຽບສອງສົກສຶກສາທີ່ຜ່ານມາ ສະແດງໃຫ້ເຫັນວ່າ: ຈຳນວນນັກສຶກສາທີ່ຮຽນຈົບຫຼຸດລົງ (8.66%) (ຫ້ອງການວິຊາການ ມສ, 2019).

ການປະກັນຄຸນນະພາບການສຶກສາຈຶ່ງເປັນປັດໄຈທີ່ສຳຄັນ ແລະ ທ້າທາຍຕໍ່ກັບ ມະຫາວິທະຍາໄລ ສຸພານຸວົງ ທີ່ຈະຜະລິດບັນດິດອອກຮັບໃຊ້ສັງຄົມໄດ້ຢ່າງມີຄຸນນະພາບ ບັນຫານີ້ຈຶ່ງຖືກຍົກຂຶ້ນມາເພື່ອພິຈາລະນາ ດ້ວຍບັນດາປະເດັນທີ່ສຳຄັນຕໍ່ໄປນີ້: ບັນດິດທີ່ປະສົບຜົນສຳເລັດໃນໜ້າວຽກງານ ຕ້ອງໄດ້ຜ່ານການສິດສອນຈາກສະຖາບັນການສຶກສາຊັ້ນສູງ ທີ່ມີຄຸນນະພາບ (Akiri & Ugborugbo, 2009) ໄດ້ລະບຸວ່າ: ການສິດສອນທີ່ມີຄຸນນະພາບແມ່ນຕ້ອງໄດ້ດຳເນີນການໃນຫຼາຍມິຕິເຂົ້າໃນການສອນ ເປັນຕົ້ນແມ່ນ: ຄວາມຊ່ຽວຊານໃນດ້ານວິຊາການ, ຄວາມພ້ອມຂອງແຜນການສອນ, ການອະທິບາຍເນື້ອໃນບົດຮຽນຢ່າງລະອຽດ ແລະ ການສື່ສານທີ່ມີຄຸນນະພາບ; ອິດທິພົນດ້ານຄວາມສາມາດໃນການຖ່າຍທອດຄວາມຮູ້ຂອງຜູ້ສອນແມ່ນຂຶ້ນກັບວ່າຈະສ້າງຜູ້ຮຽນທີ່ມີຄຸນນະພາບດ້ານວິຊາການໄດ້ດີໃນລະດັບໃດ (Adediwura & tayo, 2017). ຄຸນນະພາບໃນດ້ານເນື້ອໃນ ແລະ ຫຼັກສູດ (Karemera, Reuben, & Sillah, 2003) ໄດ້ສຶກສາພົບວ່າ: ຜົນການຮຽນຂອງນັກຮຽນແມ່ນມີຄວາມສຳພັນກັບຄຸນນະພາບໃນດ້ານເນື້ອໃນການສອນ ແລະ ການອອກແບບຂອງຫຼັກສູດຢ່າງມີໄລຍະສຳຄັນທາງສະຖິຕິ. ເນື້ອໃນຫຼັກສູດທີ່ດີແມ່ນຕ້ອງເປັນອົງປະກອບທີ່ມີສະກາຍຍະພາບທີ່ສາມາດຊ່ວຍໃຫ້ນັກສຶກສາໄດ້ຮຽນຢ່າງມີປະສິດທິພາບ ແລະ ສາມາດນຳຄວາມຮູ້ໄປໃຊ້ໄດ້ຢ່າງມີປະສິດທິຜົນ (Pozo, Stull, & Silva et al, 2006), ການບໍລິຫານກິດຈະການ ຫຼື ການຄຸ້ມຄອງສະຖາບັນ ເປັນສິ່ງທີ່ມີຄວາມສຳຄັນ ເພື່ອກຳນົດນະໂຍບາຍທາງການສຶກສາໄປສູ່ການປະຕິບັດເພື່ອໃຫ້ບັນລຸຕາມເປົ້າໝາຍ ຫຼື ຈຸດປະສົງທີ່ວາງໄວ້ ແລະ ຍັງເປັນຕົວຂັບເຄື່ອນທີ່ສຳຄັນໃນການພັດທະນາດ້ານກາຍຍະພາບ ແລະ ຄຸນນະພາບທາງວິຊາການຂອງສະຖານສຶກສາ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ (Watcharin & Narongsak, 2560), ການພັດທະນາໜ່ວຍງານຊອກວຽກເຮັດງານທຳ ຈຶ່ງຄວນມີການພັດທະນາ ແລະ ປັບປຸງໃຫ້ເໝາະ ເພື່ອຊ່ວຍໃຫ້ນັກສຶກສາໃນທຸກສະຖາບັນເປັນຕົ້ນແມ່ນ ມະຫາວິທະຍາໄລ ສຸພານຸວົງ ສາມາດເອື້ອມເຖິງຂໍ້ມູນຂ່າວສານກ່ຽວກັບຕະຫຼາດແຮງງານ ຫຼື ການຊອກວຽກເຮັດງານທຳດ້ວຍຫຼາຍຊອກທາງ (ວາລະສານ, ຂ່າວສານ ແລະ ອິນເຕີເນັດ ຫຼື social media). (SHEP, 2014) ໄດ້ລາຍງານວ່າ: ການໄດ້ວຽກເຮັດງານທຳຂອງບັນດິດໃນຂົງເຂດພາກເໜືອຂອງ ສປປ ລາວ 83.2% ວຽກທີ່ບັນດິດຮັບຜິດຊອບມີຄວາມສອດຄ່ອງກັບຂະແໜງທີ່ຮຽນຈົບ, 82.2% ບັນດິດພໍໃຈກັບວຽກທີ່ເຂົາເຮັດຢູ່ໃນລະດັບຫຼາຍ, 52% ຄວາມຮູ້ ແລະ ທັກສະທີ່ໄດ້ຮັບຈາກມະຫາວິທະຍາໄລ ສຸພານຸວົງ ເຂົ້າໃນການເຮັດວຽກປະຈຸບັນແມ່ນຢູ່ໃນລະດັບການນຳໃຊ້ຫຼາຍ ຄະນະດຽວກັນ 45.4% ບັນດິດມີຄວາມຊຳນານງານກັບໜ້າວຽກໃນບາງສ່ວນເທົ່ານັ້ນ ແລະ (Worawon & Ngamlamai, 2017) ໄດ້ກ່າວວ່າ: ທັກສະດ້ານການແກ້ບັນຫາມີອິດທິພົນຕໍ່ການພັດທະນາຕົນເອງເພື່ອກ້າວເຂົ້າສູ່ປະຊາຄົມອາຊ່ຽນ ເປັນຕົ້ນແມ່ນທັກສະດ້ານເທັກນິກ, ການສື່ສານໂດຍນຳໃຊ້ພາສາຕ່າງປະເທດ, ດ້ານໄອຊີທີ/ຄອມພິວເຕີ ແລະ ທັກສະການຄວບຄຸມດູແລບຸກຄະລາກອນ.

ຈາກບັນຫາທີ່ໄດ້ກ່າວມາຂ້າງເທິງ ຄະນະຜູ້ວິໄຈຈຶ່ງສົນໃຈສຶກສາໃນຫົວຂໍ້: ໂມເດລ໌ໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກ ມະຫາວິທະຍາໄລສຸພານຸວົງ ເພື່ອໃຫ້ໄດ້ປັດໄຈທີ່ສຳຄັນທີ່ສຸດ ເຮັດໃຫ້ບັນດິດປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ໃຫ້ມີຄວາມເພິ່ງພໍໃຈຕໍ່ກັບຜູ້ໃຊ້ແຮງງານ ແລະ ນຳຂໍ້ມູນທີ່ໄດ້ໄປໃຊ້ເພື່ອປະກອບໃນການກຳນົດນະໂຍບາຍໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນ ແລະ ຜູ້ຈ້າງແຮງານ ແລະ ພັດທະນາຄຸນນະພາບການສຶກສາພາຍໃນ ມະຫາວິທະຍາໄລສຸພານຸວົງ ຕະຫຼອດຈົນຮອດການພັດທະນາຄຸນນະພາບຂອງຜູ້ສຳເລັດການສຶກສາໃນສ່ວນອື່ນໆໃຫ້ມີຄຸນນະພາບກົງກັບຄວາມຕ້ອງການ, ຄວາມເຊື່ອຖື ແລະ ຄວາມຍອມຮັບຂອງສັງຄົມຫຼາຍທີ່ສຸດ.

ຈຸດປະສົງຂອງການວິໄຈແມ່ນ ເພື່ອສ້າງ ແລະ ພັດທະນາໂມເດລ໌ໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸ

ວິງ ແລະ ເພື່ອສຶກສາເຖິງຂໍ້ສະເໜີ ແລະ ຄໍາແນະນໍາເພີ່ມເຕີມ ເພື່ອໃຫ້ມະຫາວິທະຍາໄລ ປັບປຸງໃນດ້ານຕ່າງໆ.

## 2. ອຸປະກອນ ແລະ ວິທີການດໍາເນີນການວິໄຈ

ການສຶກສາໃນຄັ້ງນີ້ມີວິທີການດໍາເນີນການ ດັ່ງຕໍ່ໄປນີ້:

### 2.1 ກຸ່ມເປົ້າໝາຍໃນການວິໄຈ

ກຸ່ມເປົ້າໝາຍໃນການສຶກສາໄດ້ແກ່: ອະດີດນັກສຶກສາທີ່ຮຽນຈົບການສຶກສາ ຈາກມະຫາວິທະຍາໄລ ສຸພານຸວົງ ເລີ່ມແຕ່ ສົກສຶກສາ 2015-2020 ຈໍານວນ 220 ຊຸດ ໂດຍແບ່ງຕາມບັນດາແຂວງ ໃຫ້ໄດ້ຈໍານວນສັດສ່ວນທີ່ໃກ້ຄຽງກັນ ໃນ 8 ແຂວງພາກເໜືອ ແລະ ນະຄອນຫຼວງວຽງຈັນ (ບົດບັນທຶກກອງປະຊຸມ ເລກທີ 2401/ຊສ.ຄກ2 ລົງວັນທີ່ 06 ທັນວາ 2019) ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການສໍາຫຼວດໃນຄັ້ງນີ້ແມ່ນໃຊ້ວິທີການສຸ່ມແບບແບ່ງສັດສ່ວນ.

ເພື່ອໃຫ້ເກີດຄວາມເຂົ້າໃຈຕົງກັນ ຜູ້ວິໄຈຈຶ່ງໄດ້ໃຫ້ສັນຍາລັກທີ່ງ່າຍຕໍ່ການວິໄຈໃນໂປແກຣມ Amos ດັ່ງຕໍ່ໄປນີ້:

### 2.2 ກອບແນວຄວາມຄິດທີ່ໃຊ້ໃນການວິໄຈ

| | | |
|---|---|---|
| Skill | ໝາຍເຖິງ | ທັກສະໃນການເຮັດວຽກ |
| Ability | ໝາຍເຖິງ | ຄວາມສາມາດໃນການເຮັດວຽກ |
| Behavior | ໝາຍເຖິງ | ການປະພຶດຕົນໃນອົງກອນ |
| Teaching | ໝາຍເຖິງ | ການສິດສອນຂອງມະຫາວິທະຍາໄລ |
| Course | ໝາຍເຖິງ | ຫຼັກສູດທີ່ໃຊ້ໃນມະຫາວິທະຍາໄລ |
| Advice | ໝາຍເຖິງ | ຄໍາແນະນໍາໃນການຊອກວຽກເຮັດງານທໍາ ຈາກມະຫາວິທະຍາໄລ |
| Consider | ໝາຍເຖິງ | ຄວາມສອດຄ່ອງລະຫວ່າງຄວາມຮູ້ດ້ານການສຶກສາກັບໜ້າວຽກ |
| Administration | ໝາຍເຖິງ | ການບໍລິຫານ/ຄຸ້ມຄອງພາຍໃນມະຫາວິທະຍາໄລ |
| Success | ໝາຍເຖິງ | ຄວາມສໍາເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ |




ຮູບທີ 1: ໂມເດລໂຄງສ້າງປັດໄຈທີ່ສໍາຄັນສູ່ຄວາມສໍາເລັດຂັ້ນພື້ນຖານຕໍ່ໜ້າທີ່ວຽກງານຂອງບັນດິດ




ຮູບທີ 2: ໂມເດລໂຄງສ້າງປັດໄຈທີ່ສໍາຄັນສູ່ຄວາມສໍາເລັດຕໍ່ໜ້າທີ່ວຽກງານຂອງບັນດິດ

### 2.3 ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

ຂໍ້ມູນທີ່ໃຊ້ໃນການສຶກສາໃນຄັ້ງນີ້ແມ່ນ: ແບບສອບຖາມ (Questionnaires) ກ່ຽວກັບການສຶກສາສະພາບການປະກອບວຽກເຮັດງານທໍາຂອງອະດີດນັກສຶກສາທີ່ຮຽນຈົບຈາກ ມະຫາວິທະຍາໄລ ສຸພານຸວົງ ສົກສຶກສາ 2015-2020 ເຊິ່ງປະກອບມີ: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ຂໍ້ມູນກ່ຽວກັບສະຖາ

ບັນການສຶກສາທີ່ອະດີດນັກສຶກສາທີ່ຮຽນຈົບເຄີຍເຂົ້າຮຽນ, ການຊອກວຽກ ແລະ ຂໍ້ມູນກ່ຽວກັບວຽກທຳອິດທີ່ອະດີດນັກສຶກສາທີ່ຮຽນຈົບເຮັດ, ຂໍ້ມູນວຽກງານໃນປະຈຸບັນ, ຂໍ້ມູນກ່ຽວກັບປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບ, ຄວາມສອດຄ່ອງລະຫວ່າງ ຄວາມຮູ້/ທັກສະດ້ານການສຶກສາ ກັບ ໜ້າວຽກ ແລະ ຄຳແນະນຳແກ່ສະຖາບັນການສຶກສາທີ່ອະດີດນັກສຶກສາທີ່ຮຽນຈົບ. ແບບສອບຖາມຊຸດນີ້ແມ່ນສ້າງຂຶ້ນໂດຍພາຍໃຕ້ທຶນການຊ່ວຍເຫຼືອລ້າຈາກທະນາຄານພັດທະນາອາຊີ (ADB Grant No.0500-Lao (SF). Second Strengtheninghigher Education Project), ADB ຈ່າຍ 100% ແລະ ໄດ້ມີຈັດກອງປະຊຸມເພື່ອກວດສອບຫາຄວາມທ່ຽງຕາມເນື້ອໃນ, ໂຄງສ້າງ ແລະ ພາສາ ໃນຄັ້ງວັນທີ່ 04-06 ທັນວາ 2019 ແລະ ກອງປະຊຸມໄດ້ຮັບຮອງເອົາແບບສອບຖາມ ເພື່ອນຳໄປໃຊ້ໃນການລົງເກັບຂໍ້ມູນຕົວຈິງໃນແຕ່ລະຂົງເຂດ (ກົມສຶກສາຊັ້ນສູງ, 2019).

**2.4 ວິທີເກັບ ແລະ ລວບລວມຂໍ້ມູນ**

ການເກັບ ແລະ ລວບລວມຂໍ້ມູນ ຈາກອະດີດນັກສຶກສາທີ່ຮຽນຈົບ ໂດຍການສອບຖາມຂໍ້ມູນຈາກອະດີດນັກສຶກສາທີ່ຮຽນຈົບ ໃນ 8 ແຂວງພາກເໜືອ ແລະ ນະຄອນຫຼວງວຽງຈັນ (ກົມສຶກສາຊັ້ນສູງ, 2019) ທີ່ມີບັນດິດທີ່ຈົບຈາກມະຫາວິທະຍາໄລສຸພານຸວົງ ເຮັດວຽກຢູ່ໂດຍກົງ. ແບບສອບຖາມປະກອບມີຈຳນວນ 45 ຂໍ້ ທີ່ມີທັງຄຳຖາມປິດ ແລະ ຄຳຖາມເປີດ.

**2.5 ການວິເຄາະຂໍ້ມູນ**

ການວິໄຈໃນຄັ້ງນີ້ເປັນການວິໄຈແບບ (Quantitative Research) ໃຊ້ເທັກນິກການວິເຄາະ Second order confirmatory Factor Analysis: (S-CFA) ແລະ Structure Equation Modeling: (SEM) ເພື່ອວິເຄາະໂມເດລໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກ ມະຫາວິທະຍາໄລສຸພານຸວົງ ການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໂດຍໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອອະທິບາຍຂໍ້ມູນຂອງຜູ້ຕອບແບບສອບຖາມໄດ້ແກ່ ຄວາມຖີ່ (Frequency) ແລະ ສ່ວນຮ້ອຍ (Percentage), ການວິເຄາະຂໍ້ມູນໂດຍໃຊ້ໂປຣແກຣມ SPSS Version 23 ແລະ ໂປຣແກຣມ Amos Version 21 ໂດຍມີການປະມານຄ່າດ້ວຍ Maximum Likelihood: (ML) ເພື່ອກວດສອບຄວາມທ່ຽງຕົງເຊີງໂຄງສ້າງ ດ້ວຍການພິຈາລະນາຄວາມສອດຄ່ອງຂອງໂມເດລ ຕາມສົມມຸດຕິຖານໂຄງສ້າງຕາມທິດສະດີກັບຂໍ້ມູນເຊີງປະຈັກ (Empirical Data) ໂດຍພິຈາລະນາຄ່າສະຖິຕິວັດລະດັບຄວາມສອດຄ່ອງ ໄດ້ແກ່: ຄ່າໄຄສ໌ແຄ ($\chi^2$), ຄ່າໄຄສ໌ແຄສຳພັນ ($\chi^2/df$), ຄ່າດັດສະນີວັດລະດັບຄວາມກົມກືນ Goodness of Fit Index: (GFI) ຄ່າດັດສະນີວັດລະດັບຄວາມສອດຄ່ອງກົມກືນປຽບທຽບ Comparative Fit Idex:CFI ຄ່າດັດສະນີຮາກກຳລັງສອງສະເລ່ຍຂອງເສດເຫຼືອ Root Mean Square Residual: (RMR) ແລະ ຄ່າຮາກຂອງຄ່າສະເລ່ຍກາລັງສອງຂອງຄ່າຄວາມຄາດເຄື່ອນໂດຍປະມານ Root Mean Square Error of Approximate: (RMSEA)

**3. ຜົນໄດ້ຮັບ**

ຈາກການວິເຄາະຂໍ້ມູນຂອງຜູ້ສອບແບບສອບຖາມສາມາດສະຫຼຸບໄດ້ດັ່ງນີ້: ຈາກຕາຕະລາງທີ 1 ສະແດງໃຫ້ເຫັນວ່າ ຈຳນວນຜູ້ຕອບແບບສອບຖາມໃນຄັ້ງນີ້ເພດກວມເອົາເປີເຊັນສູງກວ່າເພດຍິງ 13.6% ແລະ ອາຍຸຢູ່ໃນຊ່ວງ 25-29 ປີ ເປັນຊ່ວງອາຍຸຜູ້ຕອບແບບສອບຖາມ ທີ່ກວມເອົາເປີເຊັນສູງກວ່າໝູ່

❖ **ຜົນການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງຂອງໂມເດລໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດຂັ້ນພື້ນຖານຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ**

ປັດໄຈທີ່ສຳຄັນສູ່ຄວາມສຳເລັດຂັ້ນພື້ນຖານຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ ທັງ 3 ອົງປະກອບມີນ້ຳໜັກອົງປະກອບລະຫວ່າງ 0.781-1.00 ໂດຍລຽງລຳດັບຈາກ ໜ້ອຍໄປຫາຫຼາຍທີ່ມີໄລຍະສຳຄັນທາງສະຖິຕິ 0.05 ຄື: ປັດໄຈດ້ານທັກສະ, ປັດໄຈດ້ານການປະພຶດຕົນ ແລະ ປັດໄຈດ້ານຄວາມສາມາດ ລາຍລະອຽດສະແດງໃນຕາຕະລາງ 2:

ຜົນການວິເຄາະຂອງ (S-CFA) ເພື່ອປະເມີນຄວາມເໝາະສົມ ຫຼື ສອດຄ່ອງກົມກືນ (Assessment of Model Fit) ຂອງຂໍ້ມູນເຊີງປະຈັກ (Empirical Data) ກັບໂມເດລ (Model)




Figure: Second order Confirmatory Factor nalysis: S-CFA

ຮູບທີ 3: ໂມເດລໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດຂັ້ນພື້ນຖານ

ຈາກຮູບທີ 3 ແລະ ຕາຕະລາງ 2 ພົບວ່າ: ໂມເດລມີຄວາມສອດຄ່ອງກັບຂໍ້ມູນເຊີງປະຈັກ (Empirical Data) ໂດຍພິຈາລະນາ 6 ຄ່າຕາມລຳດັບ: ຄ່າອົງສາອິດສະຫຼະ (DF) ເທົ່າກັບ 108, ຄ່າໄຄສແຄສຳພັນ $\chi^2/df$ ທີ່ໄດ້ຈາກການຄິດໄລ່ມີຄ່າສູງກວ່າຄ່າມາດຕະຖານ 2.00, ຄ່າດັດສະນີວັດຄວາມກົມກືນ (GFI) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.90, ຄ່າດັດສະນີວັດຄວາມສອດຄ່ອງກົມກືນປຽບທຽບ (CFI) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.90, ຄ່າດັດສະນີຮາກທີ່ສອງຂອງຄ່າສະເລ່ຍກຳລັງສອງຂອງສ່ວນທີ່ເຫຼືອ (RMR) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.08, ດັດສະນີຄວາມຄາດເຄື່ອນໃນການປະມານຄ່າພາລາມິເຕີ (RMSEA) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.08.

❖ **ຜົນການວິເຄາະ (SEM) ໂມເດລໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳເລັດ ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ**

ປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ ທັງ 5 ອົງປະກອບມີນ້ຳໜັກອົງປະກອບລະຫວ່າງ 0.175 - 0.272 ໂດຍລຽງລຳດັບຈາກ ໜ້ອຍໄປຫາຫຼາຍທີ່ມີໄລຍະສຳຄັນທາງສະຖິຕິ 0.1 ຄື: ປັດໄຈສຳຄັນດ້ານການສິດສອນ, ປັດໄຈສຳຄັນດ້ານຫຼັກສູດການສອນ, ປັດໄຈສຳຄັນດ້ານການຄຸມຄ້ອງຂອງຄະນະວິຊາ, ປັດໄຈສຳຄັນດ້ານຄວາມສອດຄ່ອງລະຫວ່າງຄວາມຮູ້ ກັບໜ້າວຽກ ແລະ ປັດໄຈສຳຄັນດ້ານຄຳແນະນຳ ແລະ ການຈັດຫາງານ ລາຍລະອຽດສະແດງໃນຕາຕະລາງ 3:

ຜົນການວິເຄາະ (SEM) ເພື່ອປະເມີນຄວາມເໝາະສົມ ຫຼື ສອດຄ່ອງກົມກືນ (Assessment of Model Fit) ຂອງຂໍ້ມູນເຊີງປະຈັກ (Empirical Data) ກັບໂມເດລ (Model)




ຮູບທີ4: ໂມເດລໂຄງສ້າງປັດໄຈທີ່ສຳຄັນສູ່ຄວາມສຳ

ຈາກຮູບທີ 4 ແລະ ຕາຕະລາງ 3 ພົບວ່າ: ໂມເດລມີຄວາມສອດຄ່ອງກັບຂໍ້ມູນເຊີງປະຈັກ (Empirical Data) ໂດຍພິຈາລະນາ 6 ຄ່າຕາມລຳດັບ: ຄ່າອົງສາອິດສະຫຼະ (DF) ເທົ່າກັບ 187, ຄ່າໄຄສແຄສຳພັນ $\chi^2/df$ ທີ່ໄດ້ຈາກການຄິດໄລ່ມີຄ່າສູງກວ່າຄ່າມາດຕະຖານ 2.00, ຄ່າດັດສະນີວັດຄວາມກົມກືນ (GFI) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.90, ຄ່າດັດສະນີວັດຄວາມສອດຄ່ອງກົມກືນປຽບທຽບ (CFI) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.90, ຄ່າດັດສະນີຮາກທີ່ສອງຂອງຄ່າສະເລ່ຍກຳລັງສອງຂອງສ່ວນທີ່ເຫຼືອ (RMR) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.08, ດັດສະນີຄວາມຄາດເຄື່ອນໃນການປະມານຄ່າພາລາມິເຕີ (RMSEA) ທີ່ໄດ້ຈາກການຄິດໄລ່ ມີຄ່າສູງກວ່າຄ່າມາດຕະຖານ 0.08.

**ອະດີດນັກສຶກສາທີ່ຮຽນຈົບມີຂໍ້ສະເໜີຕໍ່ມະຫາວິທະຍາໄລ ສຸພານຸວົງ ຫຼື ຄະນະບໍລິຫານຂອງມະຫາວິທະຍາໄລ ສຸພານຸວົງ ທີ່ຕົນເອງເຄີຍໄດ້ ຮຽນຜ່ານມາ:**

ຈາກການສຳຫຼວດ ສາມາດສະຫຼູບວ່າ: ຢາກໃຫ້ມະຫາວິທະຍາໄລສຸພານຸວົງ ປັບປຸງຫຼັກສູດໃຫ້ສອດຄ່ອງກັບການພັດທະນາທ້ອງຖິ່ນ ແລະ ຕະຫຼາດແຮງງານໃນປະຈຸບັນ, ປ່ຽນຮູບແບບທິດສະດີໃຫ້ເປັນການລົງເລິກພາກປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ເພາະຈະເຮັດໃຫ້ບັນດິດມີຄວາມຊ່ຽວຊານໃນດ້ານວິຊາການ, ຈັດສັນໂຄງການຈັດຫາງານໃຫ້ກັບຜູ້ທີ່ກຳລັງຈະສຳເລັດການສຶກສາໃຫ້ມີຄວາມທົ່ວເຖິງໃນທຸກພາກວິຊາ, ປັບປຸງຫ້ອງຮຽນໃຫ້ທັນສະໄໝເພື່ອກ້າວໄປສູ່ການພັດທະນາໃນລະດັບພູມມິພາກ, ຄວນປະກາດຜົນການສອບເສັງຄັດເລືອກເອົານັກສຶກສາເຂົ້າຮຽນໃນມະຫາວິທະຍາໃຫ້ໄວເທົ່າທີ່ຄວນ, ຄວນມີການສ້າງໂຄງການເພື່ອປະກັນຄຸນນະພາບຂອງບັນດິດໃຫ້ແນ່ນອນ ເປັນຕົ້ນແມ່ນການມີວຽກເຮັດງານທຳ, ການມີຄວາມຮູ້ທາງວິຊາການເພື່ອສາມາດເຂົ້າຮັບໃຊ້ໃນໜ້າວຽກທີ່ໄດ້ມອບໝາຍໃຫ້ມີປະສິດທິພາບ, ປັບປຸງຂໍ້ມູນຂ່າວສານໃຫ້ສາມາດເຂົ້າໄດ້ຢ່າງທົ່ວເຖິງ. ປັບປຸງການຈັດການຮຽນ-ການສອນໃຫ້ສອດຄ່ອງກັບຄວາມຕ້ອງການໃນປະຈຸບັນເປັນຕົ້ນແມ່ນ: ນຳໃຊ້ນະວັດຕະກຳທີ່ທັນສະໄໝ, ການສຶກສາທາງໄກ, ການສຶກສາແບບຕໍ່ເນື່ອງ, ການສຶກສາໃນຮູບແບບ E-Learning. ປັບປຸງຫ້ອງທົດລອງໃຫ້ມີເຄື່ອງມືທີ່ທັນສະໄໝ ແລະ ສາມາດນຳໃຊ້ຈິງໄດ້, ຈັດໂຄງການແລກປ່ຽນປະສົບການເປັນຕົ້ນແມ່ນດ້ານວິຊາການນຳມະຫາວິທະຍາໄລ ແຫ່ງຕ່າງໆທັ້ງພາຍໃນ ແລະ ຕ່າງປະເທດ, ເນັ້ນການຈັດການຮຽນ-ການສອນພາສາຕ່າງປະເທດໃຫ້ມີປະສິດທິຜົນ ແລະ ກ້າສະແດງອອກຕໍ່ສະທາລະນະ, ປັບປຸງລະບົບການນຳໃຊ້ລະບົບໄອຊີທີພາຍໃນມະຫາວິທະຍາໄລໃຫ້ສາມາດນຳໃຊ້ຢ່າງມີປະສິດທິພາບສູງຂຶ້ນເພື່ອໃຫ້ຄູ-ອາຈານ ແລະ ນັກສຶກສາສາມາດນຳໃຊ້ໄດ້ຢ່າງທົ່ວເຖິງ

## 4. ວິພາກຜົນ

ປັດໄຈດ້ານການປະພຶດຕົນເປັນປັດໄຈທີ່ສຳຄັນໃນການເຮັດວຽກຮ່ວມກັນກັບບຸກຄະລາກອນໃນອົງກອນຕ່າງໆ ເປັນຕົ້ນແມ່ນການປະພຶດ ຫຼື ການສະແດງອອກທີ່ມີຄວາມເຊື່ອຖືສູງ, ປະຕິບັດໂມງເວລາໃນການເຮັດວຽກ ໃນຂະນະດຽວກັນການພັດທະນາຕົນເອງໃນດ້ານການກະຕືລືລົ້ນທີ່ຈະຮຽນຮູ້ສິ່ງໃໝ່ ຫຼື ການສະໝັກໃຈ ຕ້ອງສາມາດປັບຕົວໃຫ້ເຂົ້າກັບສະພາບແວດລ້ອມຂອງໜ້າວຽກ ແລະ ສິ່ງສຳຄັນແມ່ນການສະແດງມາລະຍາດທາງສັງຄົມ ທີ່ເຮັດໃຫ້ບັນດິດປະສົບຜົນສຳເລັດໃນໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ເຊິ່ງສອດຄ່ອງກັບງານວິໄຈຂອງ (ສີຣິພອນ ສອນໄຊຍາ, 2016) ເຊິ່ງໄດ້ເວົ້າວ່າ: ປັດໄຈດ້ານການປະພຶດຮອມໃນອົງກອນເປັນປັດໄຈດ້ານພຶດຕິກຳມະນຸດໃນລະດັບບຸກຄົນເປັນການປະຕິບັດຕາມບົດບາດໜ້າທີ່ໃຫ້ເໝາະສົມກັບສະຖານະການ ເພື່ອໃຫ້ບັນລຸເປົ້າໝາຍໃນການທຳງານເຊັ່ນ: ການສື່ສານ, ພາວະຜູ້ນຳ, ວິທີການຕັດສິນໃນຂອງພາຍໃນກຸ່ມ ຕະຫຼອດຈົນເຖິງຄວາມສຳພັນລະຫວ່າງກຸ່ມຕ່າງໆໃນອົງກອນ.

ປັດໄຈດ້ານທັກສະ, ຄວາມສາມາດ ແລະ ຄວາມຮູ້ທີ່ສອດຄ່ອງກັບໜ້າວຽກຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ ເປັນປັດໄຈທີ່ຜູ້ຈົບການສຶກສາຂາດບໍ່ໄດ້ໃນນັ້ນແມ່ນທັກສະດ້ານເທັກນິກຂອງຂະແໜງວິຊາສະເພາະ, ທັກສະດ້ານພາສາຕ່າງປະເທດ, ທັກສະດ້ານໄອຊີທີ/ຄອມພິວເຕີ, ຄວາມສາມາດໃນການຖ່າຍທອດຄວາມຄິດ ແລະ ການສື່ສານກັບບຸກຄົນອື່ນ ເປັນຕົ້ນແມ່ນ: ສາມາດເຮັດວຽກເປັນທີມ, ປະສານງານກັບຜູ້ອື່ນ ແລະ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ ເຊິ່ງສອດຄ່ອງກັບງານວິໄຈຂອງ (ນະພອນ ບຸດສິດ, 2015) ພົບວ່າ: ຜູ້ບັງຄັບບັນຊາໃນອົງກອນໄດ້ສົ່ງເສີມດ້ານຄວາມສາມາດ ແລະ ທັກສະຂອງບຸກຄະລາກອນໃຫ້ເກີດການພັດທະນາປະສິດທິພາບໃນການປະຕິບັດງານ ເຊັ່ນ: ສົ່ງເສີມດ້ານການປະຕິບັດຄວາມເປັນຜູ້ນຳ, ຄວາມສາມາດໃນການແກ້ໄຂບັນຫາສະເພາະໜ້າ, ການນຳໃຊ້ເຄື່ອງມືທີ່ທັນສະໄໝ ແລະ ສາມາດເຮັດວຽກເປັນທີມ.

ປັດໄຈດ້ານການສິດສອນເປັນໝາກຫົວໃຈໃນດ້ານການຂັບເຄື່ອນທຸກບາດກ້າວແຫ່ງຄວາມສຳເລັດໃນລະດັບມະຫາວິທະຍາໄລສູ່ຄວາມສຳເລັດໃນດ້ານປະກອບອາຊີບ ແລະ ຍັງເປັນຕົວຮັບປະກັນຄຸນນະພາບດ້ານຄວາມຮູ້, ຄວາມສາມາດ ແລະ ການນຳໃຊ້ຄວາມຮູ້ທີ່ໄດ້ຮຽນມາເຂົ້າໃນໜ້າວຽກງານພາຍຫຼັງຈົບຈາກມະຫາວິທະຍາໄລສູ່ເຂົ້າເຮັດວຽກໃນອົງກອນໃດໜຶ່ງ ເຊິ່ງສອດຄ່ອງກັບງານວິໄຈຂອງ (Elvis Munyaradzi Ganyaupfu, 2013) ໄດ້ສະຫຼູບຜົນວ່າ: ຄວາມສາມາດໃນການສອນ, ຂະບວນການໃນການສອນ ແລະ ຄຸນນະພາບໃນຂໍ້ມູນການສອນແມ່ນເປັນປັດໄຈຫຼັກທີ່ມີອິດທິພົນຕໍ່ຜົນການຮຽນ ຫຼື

ຜົນການເຮັດວຽກຂອງບັນດິດດ້ວຍໄລຍະສຳຄັນທາງສະຖິຕິ ແລະ ສອດຄ່ອງກັບ (Karemera, Reuben, & Sillah, 2003) ໄດ້ຄົ້ນພົບວ່າ: ຜົນການຮຽນຂອງນັກສຶກສາມີຄວາມສຳພັນກັບຄຸນນະພາບຂອງຂໍ້ມູນການຮຽນຢ່າງມີໄລຍະສຳຄັນທາງສະຖິຕິ ແລະ ອີກປັດໄຈໜຶ່ງແມ່ນທີ່ຈະສ້າງໃຫ້ນັກສຶກສາທີ່ຈົບມີຄຸນນະພາບ ແລະ ຊ່ວຍໃຫ້ນັກສຶກສາມີປະສິດທິພາບດີຂຶ້ນຫຼາຍກວ່າເກົ່າແມ່ນມູມມອງຂອງການອອກແບບເນື້ອຫຼັກສູດ.

ປັດໄຈດ້ານການຈັດຫາງານເປັນປັດໄຈໜຶ່ງທີ່ຈະຊ່ວຍໃຫ້ບັນດິດປະສົບຜົນສຳເລັດໃນຊີວິດ ແລະ ເປັນສິ່ງນຳທາງໄປສູ່ຄວາມສຳເລັດໃນການໄດ້ວຽກເຮັດງານທຳທີ່ໝັ້ນຄົງ ເປັນຕົ້ນແມ່ນ: ຄຳແນະນຳຈາກສະຖາບັນການສຶກສາທີ່ບັນດິດໄດ້ສຶກສາຜ່ານມາ ຫຼື ຄຳແນະນຳຂອງບັນດາຄູ-ອາຈານ ເພື່ອຊ່ວຍໃນການຈັດຫາງານ, ຈັດບ່ອນຝຶກງານ ແລະ ການໃຫ້ຄຳແນະນຳໃນການຊອກວຽກ ແລະ ຊ່ວຍກະກຽມໃນການສະໝັກວຽກ ເຊັ່ນ: ການປະກອບເອກະສານຈົນເຖິງແຫຼ່ງຂໍ້ມູນໃນການສະໝັກວຽກ ເປັນຕົ້ນ ເຊິ່ງສອດຄ່ອງກັບບົດລາຍງານຂອງໂຄງການ (SHEP, 2014) ໄດ້ສະເໜີຜົນການສຶກສາໄດ້ດັ່ງນີ້: (75%) ການໄດ້ວຽກເຮັດງານທຳຈາກການແນະນຳຈາກສະຖາບັນການສຶກສາ ແລະ ຄູອາຈານມີອິດທິພົນສູງສຸດ, ຮອງລົງມາແມ່ນ: (58%) ມີໜ່ວຍງານຈັດຫາງານ ແລະ ຈັດຫາບ່ອນຝຶກງານກໍ່ມີອິດທິພົນຕໍ່ການໄດ້ວຽກເຮັດງານທຳ ແລະ ສຸດທ້າຍແມ່ນ: (33%) ຊ່ວຍແນະນຳໃນການຊອກວຽກ ແລະ ຊ່ວຍກະກຽມເອກະສານແມ່ນມີອິດທິພົນລະດັບກາງ ແລະ ເຄືອຄ່າຍທາງສັງຄົມ ຍັງມີບົດບາດໃນການຊ່ວຍຊອກວຽກເຮັດງານທຳຂອງບັນດິດທີ່ຈົບໃໝ່ອີກ.

## 5. ສະຫຼຸບຜົນ

ຈຸດປະສົງງານວິໄຈຄັ້ງນີ້ແມ່ນໄດ້ໃຫ້ປະໂຫຍດ ແລະ ແນວທາງໃນພາກປະຕິບັດໃຫ້ແກ່ມະຫາວິທະຍາໄລ ສຸພານຸວົງ ທີ່ກ່ຽວຂ້ອງກັບການປະກັນຄຸນນະພາບການສຶກສາ ທີ່ຈະຜະລິດບັນດິດອອກຮັບໃຊ້ສັງຄົມໄດ້ຢ່າງມີຄຸນນະພາບ. ຜົນການສຶກສາຍັງສາມາດໃຫ້ປະໂຫຍດແກ່ມະຫາວິທະຍາໄລ ສຸພານຸວົງໃນດ້ານການວາງກົນລະຍຸດເພື່ອໃຫ້ຄຸນນະພາບການສຶກສາ ຫຼື ຄຸນນະພາບທາງວິຊາການຂອງບັນດິດດີຂຶ້ນກວ່າເກົ່າ ແລະ ສາມາດພັດທະນາໃຫ້ຖືກກັບເປົ້າໝາຍ.

ຜົນການວິໄຈສາມາດສະຫຼຸບວ່າ: ປັດໄຈທີ່ສຳຄັນສູ່ຄວາມສຳເລັດຂັ້ນພື້ນຖານຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ ທັງ 3 ອົງປະກອບ ທີ່ມີໄລຍະສຳຄັນທາງສະຖິຕິ 0.05 ເຊັ່ນ: ປັດໄຈດ້ານການປະພຶດຕົນ, ປັດໄຈດ້ານທັກສະ ແລະ ປັດໄຈດ້ານຄວາມສາມາດ ຕາມລຳດັບ.

ປັດໄຈທີ່ສຳຄັນສູ່ຄວາມສຳເລັດຕໍ່ໜ້າທີ່ວຽກງານຂອງອະດີດນັກສຶກສາທີ່ຮຽນຈົບຈາກມະຫາວິທະຍາໄລ ສຸພານຸວົງ ທັງ 3 ອົງປະກອບ ທີ່ມີໄລຍະສຳຄັນທາງສະຖິຕິ 0.1 ເຊັ່ນ: ປັດໄຈສຳຄັນດ້ານຄຳແນະນຳ ແລະ ການຈັດຫາງານ, ປັດໄຈສຳຄັນດ້ານຄວາມສອດຄ່ອງລະຫວ່າງຄວາມຮູ້ ກັບໜ້າວຽກ, ປັດໄຈສຳຄັນດ້ານການຄຸມຄ້ອງຂອງຄະນະວິຊາ, ປັດໄຈສຳຄັນດ້ານຫຼັກສູດການສອນ ແລະ ປັດໄຈສຳຄັນດ້ານການສິດສອນ ຕາມລຳດັບ.

## 6. ຜົນປະໂຫຍດແອບແຝງ

ພວກຂ້າພະເຈົ້າທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆ ກັບອົງກອນຜູ້ສະໜອງທຶນ

## 7. ຄຳຂອບໃຈ

ພວກຂ້າພະເຈົ້າທີມງານນັກຄົ້ນຄວ້າ ຂໍສະແດງຄວາມຮູ້ບຸນຄຸນມາຍັງ ທຶນການຊ່ວຍເຫຼືອລ້າຈາກທະນາຄານພັດທະນາອາຊີ (ADB Grant No.0500-Lao (SF). Second Strengtheninghigher Education Project), ADB ຈ່າຍ 100% ທີ່ໃຊ້ໃນການລົງສຳຫຼວດ ແລະ ເກັບກຳຂໍ້ມູນໃນຄັ້ງນີ້.

## 8. ເອກະສານອ້າງອີງ


ກົມສຶກສາຊັ້ນສູງ. (2019). *ບົດບັນທຶກກອງປະຊຸມ ເລກທີ 2401/ຊສ.ຄກ2 ລົງວັນທີ 06 ທັນວາ 2019.* ນະຄອນຫຼວງວຽງຈັນ.

ສີຣິພອນ ສອນໄຊຍາ. (2016). Behavior Factors and Participation of Organization Influencing Work Success of Bangkok Life Assurance Public Com Pany Limited.

ສູນສະຖິຕິແຫ່ງຊາດ. (2018). *ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.* ເອົາມາ http://www.molsw.gov.la/.

ນະພອນ ບຸດສີ. (2015). ປັດໄຈທີ່ມີຜົນຕໍ່ປະສິດທິພາບໃນການປະຕິບັດງານຂອງບຸກຄະລາກອນ ອົງການບໍລິຫານສ່ວນຈັງຫວັດລາດສະບູລີ.

ມະຫາວິທະຍາໄລ ສຸພານຸວົງ. (2020). *ມະຫາວິທະຍາໄລ ສຸພານຸວົງ.* ເອົາມາ www.su.edu.la.

ຫ້ອງການວິຊາການ ມສ. (2019). *ໜັງສືລາຍງານສະຖິຕິນັກສອບເສັງ ສຶກສຶກສາ ແຕ່ປີ 2015-2019 ສະບັບເລກທີ 441/ມສ. ວກ.* ນະຄອນຫຼວງພະບາງ.

Adediwura, A., & tayo, B. (2017). Perception of Teachers' Knowledge, Attitude and Teaching Skills as Predictor of Academic Performance in Nigerian Secondary Schools. *Educational Research and Reviews*.

Akiri, A., & Ugborugbo, N. (2009). Teachers "Effectiveness and Students" Knowledge Attitude and Teaching Skill as Predictor of Academic Performance in Migerian

Secondary Schoos. *Educational Rsearch and Review*, 107-113.

Burmas , J., & Nakaro, A. (2013). Factors Affecting the Curriculum Administration in Schools Under. *ມະຫາວິທະຍາໄລ ລາດສະພັດພູເກັດ.*

Doungkhae Worawon , & Piolueang Ngamlamai. (2017). Factors Influencing Knowledge and skill Development in Profession ofStudents for Asean Community: A Case Study of Kasetsart University. *ວາລະສານ ສະມາຄົມນັກວິໄຈ.*

Elvis Munyaradzi Ganyaupfu.(2013). Teaching Methods and Students' Academic Performance. *International Journal of Humanities and Social Science Invention*.

Karemera, D., Reuben, L., & Sillah, M. (2003). The effects of academic environment and background characteristics on student satisfaction and performance: the case of South Carolina State University's School of Business. *College student journal*.

Pozo, S., Stull, C., & Silva et al. (2006). Results of a Randomized Experiment. *American Economic Review.*

SHEP. (2014). *REPORT ON TRACER STUDY ON GRADUATES' EMPLOYABILITY.* LAOS PDR.

Yosrungroch Watcharin, & Chunnual Narongsak. (2560). FACTORS AFFECTING THE QUALITY OF STUDENTS. *North-Chiang Mai University169 Moo3*.

**ຕາຕະລາງ 1**: ຂໍ້ມູນພື້ນຖານທີ່ໄດ້ຈາກການສຶກສາໃນຄັ້ງນີ້

| ລ/ດ | ເພດ | | ລວມ | ອາຍຸ (ປີ) | | | ລວມ |
|---|---|---|---|---|---|---|---|
| | ຊາຍ | ຍິງ | | 24 ປີ ລົງໄປ | 25-29 ປີ | 30 ຂຶ້ນໄປ | |
| ຈຳນວນ (ຄົນ) | 125 | 95 | 220 | 47 | 136 | 37 | 220 |
| ເປີເຊັນ (%) | 56.8% | 43.2% | 100% | 21.4% | 61.8% | 16.8% | 100% |

**ຕາຕະລາງ 2**: ສະແດງຄ່ານ້ຳໜັກອົງປະກອບ ແລະ ຄ່າສາປະສິດສະຫະສາພັນພະຫຸຄູນ

| ຕົວປ່ຽນ | ນ້ຳໜັກອົງປະກອບ | $R^2$ |
|---|---|---|
| ປັດໄຈດ້ານທັກສະ | 0.718 | 0.50 |
| ປັດໄຈດ້ານການປະພຶດຕົນ | 0.960 | 0.926 |
| ປັດໄຈດ້ານຄວາມສາມາດ | 1.00 | 1.00 |
| $\chi^2=559.982$, $df=108$, $\chi^2/df=1.992$, $GFI=0.901$, $CFI=0.923$, $RMR=0.0306$, $RMSEA=0.699$ | | |

**ຕາຕະລາງ3**: ສະແດງຄ່ານ້ຳໜັກອົງປະກອບ ແລະ ຄ່າສາປະສິດສະຫະສາພັນພະຫຸຄູນ

| ຕົວປ່ຽນ | ນ້ຳໜັກອົງປະກອບ | $R^2$ |
|---|---|---|
| ປັດໄຈສຳຄັນດ້ານການສິດສອນ | 0.175 | 0.054 |
| ປັດໄຈສຳຄັນດ້ານຫຼັກສູດການສອນ | 0.215 | 0.072 |
| ປັດໄຈສຳຄັນດ້ານການຄຸມຄ້ອງຂອງຄະນະວິຊາ | 0.232 | 0.031 |
| ປັດໄຈສຳຄັນດ້ານຄວາມສອດຄ່ອງລະຫວ່າງຄວາມຮູ້ ກັບໜ້າວຽກ | 0.267 | 0.046 |
| ປັດໄຈສຳຄັນດ້ານຄຳແນະນຳ ແລະ ການຈັດຫາງານ | 0.272 | 0.074 |
| $\chi^2=273.952$, $df=187$, $\chi^2/df=1.465$, $GFI=0.901$, $CFI=0.951$, $RMR=0.051$, $RMSEA=0.047$ | | |